ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຫ້ອງວ່າການສຳນັກງານປະທານປະເທດ
ກົມບໍລິຫານ ແລະ ການເງິນ

ເລກທີ 074/ບກ

ນະຄອນຫລວງວຽງຈັນ, ວັນທີ 20 ກຸມພາ 2026

# ໜັງສືແຈ້ງເຊີນປະມູນ

1. ກົມບໍລິຫານ ແລະ ການເງິນ ຫ້ອງວ່າການສຳນັກງານປະທານປະເທດ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນວຸດທິທີ່ເໝາະສົມ ເຂົ້າຍື່ນຊອງປະມູນ ສຳລັບຮັບເໝົາອານາໄມເດີ່ນ ແລະ ບັນດາອາຄານ ໃນຂອບເຂດທຳນຽບປະທານປະເທດ (ຫໍຄຳ) ໄລຍະເວລາໃຫ້ສຳເລັດ 12 ເດືອນ;
2. ການປະມູນຈະດຳເນີນຕາມຂັ້ນຕອນ ການປະມູນແບບເປີດກວ້າງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
3. ການປະມູນອະນຸຍາດໃຫ້ບັນດາບໍລິສັດ ທີ່ມີຄຸນວຸດທິເໝາະສົມ, ມີໃບອະນຸຍາດດຳເນີນທຸລະກິດ ຖືກຕ້ອງຕາມກົດໝາຍ ທີ່ກ່ຽວພັນກັບວຽກງານດັ່ງກ່າວ;
4. ບໍລິສັດ ທີ່ມີຄຸນວຸດທິເໝາະສົມ ສົນໃຈສາມາດພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ກົມບໍລິຫານ ແລະ ການເງິນ ຫ້ອງວ່າການສຳນັກງານປະທານປະເທດ ຫ້ອງຂາອອກ-ຂາເຂົ້າ ໂທ: 021 216031 ນັບແຕ່ເວລາ 08:30-16:00 ໂມງ;
5. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດ ສາມາດເຂົ້າມາຊື້ຊອງປະມູນ, ເລີ່ມແຕ່ວັນທີ 20 ກຸມພາ ຫາ ວັນທີ 27 ມີນາ 2026, ໃນລາຄາ 3,000,000 ກີບ, ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ, ວິທີການຊຳລະຕ້ອງຈ່າຍເປັນ ເງິນສົດ (ບໍ່ຮັບເງິນໂອນ);
6. ຊອງປະມູນຕ້ອງສົ່ງໃນວັນທີ 27 ມີນາ 2026 ກ່ອນເວລາ 14:00 ໂມງ ທີ່ກົມບໍລິຫານ ແລະ ການເງິນ ຫ້ອງວ່າການສຳນັກງານປະທານປະເທດ ຫ້ອງຂາອອກ-ຂາເຂົ້າ ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆຊອງຈະໄດ້ເປີດພ້ອມກັນໃນເວລາ 14:00 ໂມງຂອງວັນທີ 27 ມີນາ 2026 ຢູ່ທີ່ ຫ້ອງປະຊຸມນ້ອຍຊັ້ນ I ຫ້ອງວ່າການສຳນັກງານປະທານປະເທດ ໂດຍຊ່ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມ.

**ຫົວໜ້າກົມບໍລິຫານ ແລະ ການເງິນ**

ກົມບໍລິຫານ ແລະ ການເງິນ ຫ້ອງວ່າການສຳນັກງານປະທານປະເທດ

ນ. ໂອນິດາ ວິນາວົງ

**ເບີຕິດຕໍ່: ນ. ລິນດາ ສົມສະຫວັນ 22345 313**